


# ການກວດສອບຄວາມຈິງ

ຂັ້ນຕອນໃນການກວດໃຫ້ແນ່ໃຈວ່າສິ່ງທີ່ເຈົ້າເຫັນ ໃນອອນລາຍເປັນຄວາມຈິງ.

# ເປັນຫຍັງການກວດສອບຄວາມຈິງເຖິງສຳຄັນ?




ອິນເຕີເນັດນັ້ນເຕັມໄປດ້ວຍຂໍ້ມູນຫຼາກຫຼາຍ, ແຕ່ບໍ່ແມ່ນທຸກຢ່າງທີ່ຈະເປັນຄວາມຈິງ.

ແຫຼ່ງຂໍ້ມູນທີ່ເຊື່ອໄດ້ຈະໃຫ້ຂໍ້ມູນທີ່ຖືກຕ້ອງ, ແຕ່ມີບາງບ່ອນທີ່ເຜີຍແຜ່ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບິດເບືອນ, ຊຶ່ງເປັນຂໍ້ມູນທີ່ບໍ່ຖືກຕ້ອງ ເຮັດໃຫ້ເກີດຄວາມເຂົ້າໃຈຜິດ ເຊິ່ງອາດສ້າງຜົນກະທົບທາງລົບທີ່ຮ້າຍແຮງ.



ການຮຽນຮູ້ວິທີກວດຄວາມຈິງຈະຊ່ວຍໃຫ້ເຈົ້າຕັດສິນໃຈໄດ້ຢ່າງຮອບດ້ານ, ຫຼີກເວັ້ນການເຜີຍແຜ່ຂໍ້ມູນທີ່ຜິດ ແລະ ຄິດວິເຄາະກ່ຽວກັບສິ່ງທີ່ເຈົ້າອ່ານໃນອິນເຕີເນັດ.

ນີ້ແມ່ນບາງຂັ້ນຕອນ
ເພື່ອຊ່ວຍໃຫ້ເຈົ້າກວດຄວາມຈິງ
ຂອງສິ່ງທີ່ເຈົ້າພົບໃນອອນລາຍ.



# ພິຈາລະນາແຫຼ່ງຂໍ້ມູນ

- ຖາມຕົນເອງ: ຜູ້ໃດເປັນຄົນສ້າງເນື້ອໃນນີ້? ເຈົ້າເຄີຍໄດ້ຍິນກ່ຽວກັບພວກເຂົາບໍ່?
- ແຫຼ່ງຂໍ້ມູນທີ່ເຊື່ອໄດ້ລວມມີ ອົງການສື່ຂ່າວ, ສະຖາບັນການສຶກສາ, ແລະ ເວັບໄຊຂອງລັດ (ຕົວຢ່າງ: BBC News, IPCC, UN websites).
- ຫຼີກເວັ້ນແຫຼ່ງຂໍ້ມູນທີ່ບໍ່ມີຂໍ້ມູນກ່ຽວກັບຜູ້ຂຽນ ຫຼື ຈຸດປະສົງ. ກວດເບິ່ງຊ່ວຍ ‘ABOUT’ ຂອງເວັບໄຊ.
- ລະມັດລະວັງເວັບໄຊທີ່ມີຊື່ໂດເມນແປກປະຫຼາດ (ຕົວຢ່າງ: .info ຫຼື .biz) ແທນທີ່ຈະໃຊ້ໂດເມນທີ່ມີຄວາມໜ້າເຊື່ອຖື ຄື .gov, .com ຫຼື .org.

**ຈົ່ງກວດຄວາມຈິງກ່ອນທຸກຄັ້ງຈຶ່ງແບ່ງປັນໃຫ້ຄົນອື່ນ!**



# ກວດສອບຂໍ້ມູນຢ່າງລະອຽດຫຼາຍແຫຼ່ງ

- ຊອກຫາຂໍ້ມູນດຽວກັນຈາກແຫຼ່ງຂໍ້ມູນທີ່ເຊື່ອໄດ້ຫຼາຍໆແຫຼ່ງ.
- ຖ້າມີສະເພາະເວັບໄຊດຽວທີ່ລະບຸຂໍ້ມູນ ອາດຈະບໍ່ຖືກຕ້ອງ.
- **ປຽບທຽບວ່າສື່ຂ່າວຕ່າງໆລາຍງານເຫດການດຽວກັນແນວໃດ.**

**ຈົ່ງກວດຄວາມຈິງທຸກຄັ້ງກ່ອນແບ່ງປັນໃຫ້ຄົນອື່ນ!**



# ກວດສອບວັນທີ

- ຂໍ້ມູນເກົ່າອາດຈະເຮັດໃຫ້ເກີດການເຂົ້າໃຈຜິດ. ກວດເບິ່ງວ່າບົດຄວາມນັ້ນຖືກເຜີຍແຜ່ເມື່ອໃດ ແລະ ມີຂໍ້ມູນໃໝ່ກວ່ານີ້ບໍ່.

- ລະມັດລະວັງຂ່າວເຫດການເກົ່າທີ່ຖືກເຜີຍແຜ່, ແຊຮອອກໄປປານກັບວ່າເປັນເຫດການທີ່ເກີດຂຶ້ນໃໝ່.

**ຈົ່ງກວດຄວາມຈິງທຸກຄັ້ງກ່ອນແບ່ງປັນໃຫ້ຄົນອື່ນ!**



# ກວດສອບຫຼັກຖານ

- ບົດຄວາມທີ່ເຊື່ອໄດ້ຈະມີການເຊື່ອມຕໍ່, ການອ້າງອີງ, ຫຼື ແຫຼ່ງຂໍ້ມູນທີ່ອ້າງອີງເພື່ອສະໜັບສະໜູນຄຳກ່າວນັ້ນ.
- ບົດຄວາມນີ້ມີຂໍ້ໂຕ້ແຍ່ງຕາມຫຼັກຖານທີ່ກ່ຽວຂ້ອງກັບຫົວຂໍ້ ຫຼື ບໍ່, ຫຼື ຟັງເບິ່ງມັນເປັນຄວາມຄິດເຫັນສ່ວນຕົວ?
- ຈົ່ງມີຄວາມສົງໄສກ່ຽວກັບແຫຼ່ງຂໍ້ມູນທີ່ບໍ່ເປີດເຜີຍໂຕຕົນ.
- ຖ້າຄຳອ້າງເໝືອນເປັນສິ່ງໜ້າຕົກໃຈ ບໍ່ໜ້າເຊື່ອ, ຈົ່ງກວດຄວາມຈິງກ່ອນແບ່ງປັນໃຫ້ຄົນອື່ນ.

**ຈົ່ງກວດຄວາມຈິງກ່ອນທຸກຄັ້ງຈຶ່ງແບ່ງປັນໃຫ້ຄົນອື່ນ!**

# ແນມເບິ່ງຫາອັກຂະຕິ ແລະ ພາສາທາງອາລົມ



- ເວັບໄຊ ແລະ ຂໍ້ຄວາມໃນສື່ສັງຄົມອອນລາຍບາງອັນ ໃຊ້ພາສາທີ່ຮຸນແຮງ ແລະ ເຕັມໄປດ້ວຍອາລົມ ເພື່ອຊັກຈູງໃຈ ນອກເໜືອຈາກການໃຫ້ຂໍ້ມູນ.

- ເບິ່ງຫາພາສາທີ່ເປັນກາງ ແລະ ລາຍງານຕາມຄວາມຈິງ ແທນການໃຊ້ຄວາມຄິດເຫັນ ຫຼື ຄຳອ້າງທີ່ເກີນຄວາມເປັນຈິງ.

- ການລາຍງານຂ່າວທີ່ອີງຕາມຂໍ້ມູນຄວາມຈິງຈະສະເໜີມຸມມອງທີ່ແຕກຕ່າງກັນ, ໃນຂະນະທີ່ແຫຼ່ງຂໍ້ມູນທີ່ມີຄວາມລຳອຽງຈະເວົ້າເຖິງຄວາມຄິດເຫັນພຽງດ້ານດຽວ.

**ຈົ່ງກວດຄວາມຈິງກ່ອນທຸກຄັ້ງຈຶ່ງແບ່ງປັນໃຫ້ຄົນອື່ນ!**

# ເຝົ້າລະວັງຮູບພາບ ແລະ ວິດີໂອທີ່ຖືກດັດແປງ ຕັດຕໍ່



- ຮູບພາບ ແລະ ວິດີໂອບາງຢ່າງຖືກດັດແປງເພື່ອໃຫ້ຄົນເຂົ້າໃຈຜິດ

- ໃຊ້ຄົ້ນຫາຮູບພາບທີ່ຍ້ອນກັບ (ຕົວຢ່າງ: Google Reverse Image Search ຫຼື TinEye) ເພື່ອກວດສອບວ່າຮູບພາບນີ້ເຄີຍຖືກໃຊ້ບ່ອນອື່ນແລ້ວ ຫຼື ບໍ່.

  ໃນເວລາດຽວກັນ, ເຈົ້າສາມາດຖ່າຍເອົາຢູ່ໜ້າຈໍ (ສະກຣີນຊັອດ) ຂອງວິດີໂອ ແລ້ວນຳໄປຄົ້ນຫາດ້ວຍເຄື່ອງມືເຫຼົ່ານີ້ ໄດ້ອີກດ້ວຍ.

- ແນມເບິ່ງແລະກວດຫາການເຄື່ອນໄຫວທີ່ບໍ່ເປັນທຳມະຊາດ, ການຕັດຕໍ່, ຫຼື ຄວາມບໍ່ສະໝໍ່າສະເໝີຂອງແສງ-ເງົາ, ເຊິ່ງນີ້ອາດຈະເປັນສິ່ງທີ່ບອກເຖິງການຈັດການດັດແປງບາງອັນ

- ຖ້າຮູບພາບ ຫຼື ວິດີໂອໜ້າຕື່ນເຕັ້ນ ຫຼື ສ້າງໃຫ້ເປັນປະເດັນ, ຄວນກວດສອບກ່ອນຈຶ່ງແບ່ງປັນໃຫ້ຄົນອື່ນ.

# ເຄັດລັບສຸດທ້າຍ



### ຈົ່ງຖາມທຸກຄັ້ງວ່າ: ແຫຼ່ງຂໍ້ມູນເປັນແນວໃດ?

ໃຜເປັນຄົນຂຽນນີ້? ຂໍ້ມູນມາຈາກໃສ? ຂ້ອຍສາມາດກວດສອບຢັ້ງຢືນ ໄດ້ບໍ?

### ຄິດກ່ອນທີ່ເຈົ້າຈະແບ່ງປັນໃຫ້ຄົນອື່ນ

ຖ້າເຈົ້າບໍ່ແນ່ໃຈ ຫຼື ຄິດວ່າມີຄວາມສົງໄສ, ຈົ່ງຢ່າແບ່ງປັນ.

### ຢູ່ກັບຄວາມຢາກຮູ້ຢາກເຫັນ ສົງໃສ!

ການຄິດວິເຄາະຊ່ວຍໃຫ້ເຈົ້າທ່ອງທ່ຽວໃນໂລກອອນລາຍໄດ້ຢ່າງມີສະຕິ ແລະ ຮັບຜິດຊອບ.